**ມິຊຊາວັນພຸດຮັບເທົ່າ**

**ເລີ່ມຕົ້ນກຳນົດບຳເພັນສິນ ປີ A**

**ວັນພຸດ 26 ກຸມພາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 6, 1-6, 16-18**

ໃນເວລານັ້ນ, ພວກລູກສິດມາເຕົ້າໂຮມກັນອ້ອມໆພຣະເຢຊູເຈົ້າຢູ່ເທິງພູໜ່ວຍໜຶ່ງ ພຣະອົງຈຶ່ງກ່າວກັບພວກເຂົາວ່າ: "ຖ້າພວກເຈົ້າຢາກຈຳເລີນຊີວິດເປັນຄົນຊອບທຳ, ຢ່າໄດ້ທຳການບຸນຕໍ່ໜ້າມະນຸດເພື່ອໃຫ້ເຂົາຍ້ອງ. ຖ້າທຳດັ່ງນີ້, ພວກເຈົ້າຈະບໍ່ໄດ້ຮັບລາງວັນຈາກພຣະບິດາເຈົ້າສະຫວັນ.

ດັ່ງນີ້, ເມື່ອພວກເຈົ້າທຳການບຸນໃຫ້ທານ, ຢ່າໄດ້ເປົ່າແກໄປກ່ອນເໝືອນພວກຫຼູມໃຈບຸນເຄີຍກະທຳຢູ່ຕາມໂຮງທຳ ຫລືຕາມຖະໜົນຫົນທາງໂດຍຫວັງຈະໃຫ້ຄົນຍ້ອງ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ພວກເຂົາໄດ້ຮັບບຳເນັດລາງວັນແລ້ວ. ສ່ວນເຈົ້າ, ເມື່ອທຳບຸນໃຫ້ທານດ້ວຍມືຂວາກໍຢ່າໃຫ້ມືຊ້າຍຮູ້ນຳ, ເພື່ອໃຫ້ການບຸນຂອງເຈົ້າເປັນຄວາມລັບ ແລ້ວພຣະບິດາຂອງເຈົ້າຜູ້ຊົງແລເຫັນໃນທີ່ລັບລີ້ຈະໃຫ້ບຳເນັດແກ່ເຈົ້າ.

ເມື່ອພວກເຈົ້າສວດພາວະນາຢ່າເປັນຄືພວກຫຼູມໃຈບຸນທີ່ມັກຢືນສວດຢູ່ໃນໂຮງທຳ ຫລືຕາມທາງແຍກເພື່ອໃຫ້ຄົນຍ້ອງ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ ພວກເຂົາໄດ້ຮັບລາງວັນແລ້ວ. ສ່ວນພວກເຈົ້າ, ເມື່ອຈະສວດພາວະນາ, ໃຫ້ເຂົ້າໃນຫ້ອງອັດປະຕູໄວ້ແລ້ວອ້ອນວອນຂໍພຣະບິດາຂອງເຈົ້າຜູ້ຊົງແລເຫັນໃນບ່ອນລັບລີ້ຈະໃຫ້ບຳເນັດແກ່ເຈົ້າ.

ເມື່ອເວລາພວກເຈົ້າຖືສິນອົດອາຫານ, ຢ່າໄດ້ມີທ່າທາງໂສກເສົ້າຄືພວກຫຼູມໃຈບຸນ. ພວກນັ້ນ, ເຂົາທຳໜ້າຫົດຫູ່ເພື່ອສຳແດງໃຫ້ຄົນອື່ນຮູ້ວ່າເຂົາຖືສິນອົດອາຫານ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ພວກເຂົາໄດ້ຮັບບຳເນັດແລ້ວ. ສ່ວນເຈົ້າ, ເມື່ອເວລາຖືສິນອົດ, ໃຫ້ເຈົ້າສະຫົວດ້ວຍນ້ຳຫອມ, ລ້າງໜ້າລ້າງຕາ, ເພື່ອບໍ່ໃຫ້ປາກົດແກ່ຄົນອື່ນວ່າເຈົ້າຖືສິນອົດອາຫານ, ແຕ່ໃຫ້ພຣະບິດາຂອງເຈົ້າຜູ້ສະຖິດຢູ່ບ່ອນລັບລີ້ຊາບນຳເທົ່ານັ້ນ. ແລະພຣະບິດາຂອງເຈົ້າຜູ້ຊົງແລເຫັນໃນບ່ອນລັບລີ້ຈະໃຫ້ບຳເນັດແກ່ເຈົ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 6, 1-6, 16-18**

ແຕ່ລະປີກ່ອນຈະສະຫລອງເຫດການສຳຄັນໃນປະຫວັດສາດແຫ່ງຄວາມຣອດກໍຄືໃນຊີວິດຄວາມເຊື່ອຂອງພວກເຮົາ, ພຣະກຣິສຕະຈັກຈະໃຫ້ພວກເຮົາມີເວລາເພື່ອກະກຽມຈິດໃຈ ແລະເພື່ອເຂົ້າໃຈຄວາມໝາຍໃນເຫດການທີ່ພວກເຮົາຈະສະຫລອງ ອັນຈະນຳມາຊຶ່ງຄວາມຣອດສຳລັບຊີວິດຄວາມເຊື່ອຂອງພວກເຮົາ. ຢ່າງເຊັ່ນ: ກ່ອນທີ່ພວກເຮົາຈະສະຫລອງການບັງເກີດມາຂອງພຣະເຢຊູເຈົ້າ, ພຣະກຣິສຕະຈັກກໍໃຫ້ເວລາພວກເຮົາສີ່ອາທິດເພື່ອຈະໄດ້ຕຽມພ້ອມບໍ່ພຽງແຕ່ຖ້ຳພຣະກຸມານພາຍນອກ ແຕ່ຍັງແມ່ນຈິດໃຈຂອງພວກເຮົາອັນແມ່ນຖ້ຳຊຶ່ງອົງແຫ່ງແອມມານູແອນຈະລົງມາປະທັບຢູ່ກັບພວກເຮົາຕະຫລອດໄປ.

ເຊັ່ນດຽວກັນ, ກ່ອນທີ່ຈະສະຫລອງບຸນປາສກາ, ວັນພຣະເຢຊູເຈົ້າກັບເປັນຄືນມາຈາກຄວາມຕາຍ, ພຣະກຣິສຕະຈັກກໍໃຫ້ເວລາພວກເຮົາສີ່ສິບວັນຊຶ່ງເລີ່ມຕົ້ນຈາກວັນພຸດຣັບເທົ່າຈົນເຖິງວັນພຣະຫັດສັກສິດ. ໃນຊ່ວງເວລາສີ່ສິບວັນນີ້ພຣະກຣິສຕະຈັກຮຽກວ່າ: ກຳນົດບຳເພັນສິນ.

ສີ່ສິບວັນນີ້ມີຄວາມໝາຍແນວໃດ? ແລະພວກເຮົາຕ້ອງກະທຳຫຍັງແດ່ໃນຊ່ວງກຳນົດບຳເພັນສິນນີ້?

ສຳລັບພວກເຮົາຜູ້ເຊື່ອໃນພຣະເຈົ້າ, ກຳນົດເວລາສີ່ສິບວັນທຳໃຫ້ພວກເຮົາຄິດເຖິງເຫດການທີ່ພຣະເຈົ້າໄດ້ປົດປ່ອຍຊົນຊາດອິສຣາແອນອອກຈາກການເປັນທາດຂອງປະເທດເອຢິບພາຍໃຕ້ການນຳພາຂອງໂມແຊ. ພວກເຂົາໄດ້ໃຊ້ຊີວິດໃນທະເລຊາຍເປັນເວລາສີ່ສິບປີກ່ອນທີ່ຈະເຂົ້າສູ່ດິນສັນຍາ. ຊ່ວງເວລານີ້ເປັນໂອກາດໃຫ້ຊົນຊາດອິສຣາແອນໄດ້ກັບມາຫາພຣະເຈົ້າຂອງເຂົາໂດຍການຟັງແລະປະຕິບັດຕາມວາຈາຂອງພຣະອົງ, ຊຶ່ງພວກເຮົາຮຽກວ່າພຣະບັນຍັດສິບປະການນັ້ນເອງ. ອັນເປັນພັນທະສັນຍາຊຶ່ງພຣະເຈົ້າໄດ້ກະທຳກັບຊົນຊາດອິສຣາແອນ, ປະຊາກອນຜູ້ເລືອກສັນຂອງພຣະອົງ.

ຈາກນັ້ນ, ໃນພຣະທຳໃໝ່, ກຳນົດເວລາສີ່ສິບວັນທຳໃຫ້ພວກເຮົາຄິດເຖິງເຫດການຫລັງຈາກພຣະເຢຊູເຈົ້າຮັບສິນລ້າງຈາກທ່ານຢວງ, ພຣະຈິດເຈົ້າໄດ້ນຳພຣະອົງເຂົ້າໄປໃນທີ່ປ່ຽວເປັນເວລາສີ່ສິບວັນ. ໃນຊ່ວງເວລານີ້, ພຣະອົງໄດ້ສະໜິດສຳພັນກັບພຣະບິດາເຈົ້າໂດຍທາງຄຳພາວະນາ. ແລະພຣະອົງໄດ້ຊະນະການປະຈົນຫລອກລວງຂອງຜີປີສາດດ້ວຍວາຈາຂອງພຣະເຈົ້າ.

ສຳລັບພວກເຮົາກໍເຊັ່ນດຽວກັນ, ຊ່ວງເວລາສີ່ສິບວັນແຫ່ງກຳນົດບຳເພັນສິນນີ້ເປັນໂອກາດໃຫ້ພວກເຮົາໄດ້ກັບຄືນມາຫາພຣະເຈົ້າພຣະບິດາຂອງພວກເຮົາຢ່າງໝົດຈິດໃຈ ເພື່ອພວກເຮົາຈະໄດ້ຟັງສຽງຂອງພຣະອົງແລະປະຕິບັດຕາມພຣະປະສົງຂອງພຣະອົງ. ພຣະປະສົງຂອງພຣະອົງແມ່ນຫຍັງ?

ພວກເຮົາສາມາດຮູ້ຈັກນ້ຳພຣະໄທຂອງພຣະເຈົ້າຜ່ານທາງວາຈາຂອງພຣະອົງ ໂດຍສະເພາະແມ່ນວາຈາທີ່ພວກເຮົາໄດ້ຟັງວັນນີ້. ພຣະເຢຊູເຈົ້າປາດຖະໜາໃຫ້ພວກເຮົາເປັນຜູ້ຊອບທຳເໝືອນພຣະບິດາເຈົ້າສະຫວັນ. ເພື່ອຈະເປັນເໝືອນພຣະບິດາ, ກ່ອນອື່ນໝົດພວກເຮົາຕ້ອງມີໃຈເມດຕາກະລຸນາ ຄືການຮູ້ຈັກແບ່ງປັນທຳບຸນໃຫ້ທານຕໍ່ຜູ້ທີ່ຕ້ອງການຄວາມຊ່ວຍເຫລືອຈາກພວກເຮົາ. ຄວາມເມດຕາກະລຸນາຂອງພວກເຮົາຈະເປັນຈິງໄດ້ກໍຕໍ່ເມື່ອພວກເຮົາມີຄວາມສະໜິດສຳພັນກັບພຣະເຈົ້າຜ່ານທາງຄຳພາວະນາ. ເມື່ອພວກເຮົາເປັນໜຶ່ງດຽວກັບພຣະເຈົ້າພຣະບິດາແລ້ວ ພວກເຮົາຈະບໍ່ມີຄວາມຜູກພັນກັບສິ່ງຂອງໆໂລກນີ້ອີກ. ສິ່ງນີ້ສະແດງອອກຜ່ານທາງການຖືສິນອົດອາຫານ.

ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍຕຽມຈິດໃຈພວກເຮົາໃຫ້ກ້າວເຂົ້າສູ່ກຳນົດບຳເພັນສິນດ້ວຍຄວາມສັດທາແລະຊື່ນຍິນດີ. ຍ້ອນວ່າດຽວນີ້ແມ່ນເວລາອັນເໝາະສົມ ແລະດຽວນີ້ແມ່ນເວລາແຫ່ງຄວາມຣອດສຳລັບພວກເຮົາ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ